ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 293 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 21 ພຶດສະພາ 2021

# ແຈ້ງການ (ເພີ່ມຕື່ມ)

**ເຖິງ: - ທ່ານ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ;**

**- ບັນດາເຈົ້າໜ້າທີ່ໆກ່ຽວຂ້ອງ;**

**- ຜູ້ປະກອບການຂົນສົ່ງໂດຍສານ ແລະ ສິນຄ້າ.**

**ເລື່ອງ: ມາດຕະການຜ່ອນຜັນ ການຂົນສົ່ງ ໂດຍສານ ແລະ ສິນຄ້າ ໃນໄລຍະ ສືບຕໍ່ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂການລະບາດຂອງພະຍາດໂຄວິດ-19 ຢູ່ ສປປ ລາວ**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 295/ນຍ, ລົງວັນທີ 04/09/2017;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21/04/2021;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021, ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021, ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຈຶ່ງອອກແຈ້ງການເພີ່ມຕື່ມ ດັ່ງນີ້:

1. ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ ແລະ ທາງນ້ຳ ພາຍໃນແຂວງ/ນະຄອນຫຼວງ ທີ່ບໍ່ມີການລະບາດໃນຊຸມຊົນ ຕາມການກຳນົດໂດຍຂະແໜງສາທາລະນະສຸກ, ແຕ່ຕ້ອງປະຕິບັດຕາມມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ເປັນຕົ້ນແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ໝັ່ນລ້າງມືໃສ່ສະບູ ຫລື ເຈວລ້າງມື, ທຳຄວາມສະອາດ ແລະ ອະນາໄມຂ້າເຊື້ອພາຍໃນຍານພາຫະນະຂົນສົ່ງຢ່າງເປັນປົກກະຕິ;
2. ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ ລະຫວ່າງແຂວງຕໍ່ແຂວງທີ່ບໍ່ມີການລະບາດພາຍໃນຊຸມຊົນ ຕາມການກຳນົດໂດຍຂະແໜງສາທາລະນະສຸກ, ແຕ່ຕ້ອງປະຕິບັດຕາມມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ-19ທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ໝັ່ນລ້າງມືໃສ່ສະບູ ຫລື ເຈວລ້າງມື, ທຳຄວາມສະອາດ ແລະ ອະນາໄມຂ້າເຊື້ອພາຍໃນຍານພາຫະນະຂົນສົ່ງຢ່າງເປັນປົກກະຕິ;
3. ການຂົນສົ່ງສິນຄ້າ ພາຍໃນປະເທດ, ລະຫວ່າງປະເທດ ແລະ ຜ່ານແດນ ແມ່ນໃຫ້ສືບຕໍ່ປະຕິບັດຕາມແຈ້ງການ ຂອງ ກະຊວງ ໂຍທາທິການ ແລະຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23/4/2021. ສຳລັບການຂົນສົ່ງສິນຄ້າພາຍໃນປະເທດ, ຖ້າມີເອກະສານຂົນສົ່ງຄົບຖ້ວນແລ້ວ ແມ່ນສາມາດຂົນສົ່ງສິນຄ້າໄປເຖິງປາຍທາງໄດ້ເລີຍ ໂດຍບໍ່ໃຫ້ມີມາດຕະການ ແລະ ເອກະສານອື່ນໆຕື່ມອີກເຊັ່ນ: ການຄຸ່ງນຖ່າຍສິນຄ້າລະຫວ່າງທາງ, ໃບອະນຸຍາດເພີ່ມເຕີມຈາກຂະແໜງຕ່າງໆ, ໃບຢັ້ງຢືນການກວດຫາເຊື້ອພະຍາດໂຄວິດ-19, ໃບຢັ້ງຢືນການສັກວັກຊີນໂຄວິດ-19 ຫຼື ການກັກຕົວຄົນຂັບລົດເປັນເວລາ 14 ວັນ, ແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ພະຍາດໂຄວິດ-19 ທີ່ຄະນະສະເພາະກິດວາງອອກຢ່າງເຂັ້ມງວດ;
4. ໃຫ້ບັນດາຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດໂຄວິດ-19 ຂັ້ນນະຄອນຫຼວງວຽງຈັນ, ຂັ້ນແຂວງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ/ແຂວງ ແລະ ຜູ້ປະກອບການຂົນສົ່ງ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເປັນເອກະພາບທົ່ວປະເທດ;
5. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ລັດຖະມົນຕີ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ລັດຖະມົນຕີ

ລັນ ແສງອາພອນ